# ໃນໂຮງຮຽນ 67, ພວກເຮົາ ຮ້ອງເພງ "ຈຳປາເມືອງລາວ"

## ---ໃນໂອກາດການຕັ້ງສາຍພົວພັນການທູດ ລາວ-ຈີນ ຄົບຮອບ 65 ປີ







ເລົ່າເລື່ອງໂດຍ: ທ່ານ ປອ. ກິແກ້ວ ໄຂຄຳພິທູນ, ກຳມະການກົມການເມືອງສູນກາງພັກ, ປະທານ ແນວລາວສ້າງຊາດ

ໃນບົດເພງ “ຈຳປາເມືອງ ລາວ”, ເຊິ່ງເປັນບົດເພງພື້ນເມືອງລາວເຮົາ ມີເນື້ອຮ້ອງທ່ອນໜຶ່ງທີ່ຮ້ອງວ່າ: “ເມື່ອດົມກິ່ນເຈົ້າ, ປານພົບບ້ານເກົ່າທີ່ພາກຈາກໄປ...”. ສຳລັບຂ້າພະເຈົ້າແລ້ວ, ບົດເພງນີ້ບໍ່ພຽງແຕ່ເປັນສິ່ງແທນຄວາມຄິດຮອດຄິດເຖິງບ້ານເກີດເທົ່ານັ້ນ, ແຕ່ມັນຍັງເປັນສິ່ງບັນທຶກ ແລະ ຖ່າຍທອດສາຍໃຍແຫ່ງຄວາມຜູກພັນອັນເລິກເຊິ່ງລະຫວ່າງ ຂ້າພະເຈົ້າ ແລະ ປະເທດຈີນ ທີ່ໄດ້ຢັ່ງຮາກເລິກມາເປັນເວລາຫຼາຍກວ່າເຄິ່ງສະຕະວັດອີກດ້ວຍ.

ປີນີ້ ແມ່ນປີແຫ່ງການສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດລະຫວ່າງ ລາວ-ຈີນ ຄົບຮອບ 65 ປີ. ເມື່ອໄດ້ຫວນຄືນເບິ່ງໄລຍະທາງທີ່ສອງຊາດພວກເຮົາໄດ້ຮ່ວມຊາຕາກຳ ແລະ ຜ່ານຜ່າອຸປະສັກຕ່າງໆມາດ້ວຍກັນນັ້ນ, ພາຍໃນຈິດໃຈຂອງຂ້າພະເຈົ້າແມ່ນເຕັມໄປດ້ວຍຄວາມຕື້ນຕັນໃຈຢ່າງບອກບໍ່ຖືກ. ໂດຍສະເພາະແມ່ນໄລຍະເວລາທີ່ໄດ້ໄປສຶກສາຮ່ຳຮຽນຢູ່ປະເທດຈີນ ທ່າມກາງແປວໄຟສົງຄາມໃນສະຕະວັດກ່ອນນັ້ນ, ມັນຍັງຄົງເປັນຄວາມຊົງຈຳອັນລ້ຳຄ່າທີ່ສຸດ ທີ່ຝັງເລິກຢູ່ໃນສ່ວນເລິກຂອງຫົວໃຈຂ້າພະເຈົ້າສະເໝີມາ ແລະ ກໍແມ່ນບົດບັນທຶກຕົວຈິງທີ່ສະແດງໃຫ້ເຫັນເຖິງມິດຕະພາບແຫ່ງການຮ່ວມທຸກຮ່ວມສຸກ ລະຫວ່າງ ສອງຊາດ ລາວ-ຈີນ ຢ່າງແທ້ຈິງ.

ໃນຊຸມປີ 60 ຂອງສະຕະວັດທີ່ຜ່ານມາ, ທ່າມກາງແປວໄຟສົງຄາມຮຸກຮານຂອງຈັກກະພັດອາເມຣິກາ ທີ່ພວມແຜ່ລາມໄປທົ່ວດິນແດນລາວ, ເຊິ່ງເປັນໄລຍະທີ່ປະເທດຊາດ ແລະ ຊາຕາກຳຂອງປະຊາຊົນ ພວມປະເຊີນໜ້າກັບ ການທົດສອບອັນໜັກໜ່ວງ ແລະ ຢູ່ໃນສະພາບທີ່ຄັບຂັນທີ່ສຸດນັ້ນ, ການນຳສູງສຸດຂອງສອງພັກພວກເຮົາ ໄດ້ມີການຕັດສິນໃຈຍຸດທະສາດອັນສະຫຼາດສ່ອງໃສ ແລະ ຖືກຕ້ອງທີ່ສຸດ, ທັນການທີ່ສຸດ, ນັ້ນຄືການສົ່ງບຸດຫຼານຂອງນັກປະຕິວັດລາວ ໄປສຶກສາຮ່ຳຮຽນຢູ່ປະເທດຈີນ ເພື່ອໃຫ້ເຂົາເຈົ້າໄດ້ເຕີບໃຫຍ່ຂະຫຍາຍຕົວໃນສະພາບແວດລ້ອມທີ່ປອດໄພ ແລະ ເພື່ອສະສົມກຳລັງແຮງໃຫ້ແກ່ອະນາຄົດຂອງປະເທດຊາດ. ຍ້ອນການຕັດສິນໃຈອັນມີວິໄສທັດກວ້າງໄກໃນຄັ້ງນັ້ນ, ຈຶ່ງໄດ້ເຮັດໃຫ້ຂ້າພະເຈົ້າ ມີໂອກາດໄດ້ຢຽບລົງບົນຜືນແຜ່ນດິນຈີນ ແລະ ເລີ່ມຕົ້ນເສັ້ນທາງແຫ່ງການສຶກສາ ທີ່ໄດ້ປ່ຽນແປງຊີວິດຂອງຂ້າພະເຈົ້າໄປຕະຫຼອດການ.

ໃນປີ 1968, ຕອນນັ້ນຂ້າພະເຈົ້າມີອາຍຸໄດ້ 10 ປີ, ແລະຖືວ່າໂຊກດີທີ່ສຸດ ທີ່ໄດ້ຖືກຄັດເລືອກໃຫ້ເຂົ້າຮຽນຢູ່ໂຮງຮຽນ 67 ທີ່ ສປ ຈີນ. ພວກເຮົາໄດ້ເລີ່ມອອກເດີນທາງຈາກປ່າດົງ ເຂດປະຕິວັດ ເມືອງວຽງໄຊ ແຂວງຫົວພັນ, ຜ່ານເສັ້ນທາງອັນຍາກລຳບາກ ແລະ ຜ່ານຫຼາຍຂັ້ນຕອນ ຈົນສາມາດເດີນທາງເຖິງນະຄອນນານໜິງ ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ ປະເທດຈີນ ຢ່າງປອດໄພ. ໂຮງຮຽນລາວທີ່ຕັ້ງຢູ່ເທິງຜືນແຜ່ນດິນຈີນແຫ່ງນີ້, ບໍ່ພຽງແຕ່ເປັນສະຖານທີ່ຫຼົບໄພສົງຄາມເທົ່ານັ້ນ, ແຕ່ຍັງເປັນຫໍໂຮງແຫ່ງຄວາມຮູ້ອັນສັກສິດ ແລະ ເປັນບ່ອນຝາກຝັງຄວາມມຸ່ງຫວັງອັນແຮງກ້າ ຂອງສອງພັກ ສອງລັດ ທີ່ມີຕໍ່ຄົນຮຸ່ນໜຸ່ມ. ຜູ້ອຳນວຍການໂຮງຮຽນ, ຄູສອນແມ່ນພີ່ນ້ອງຮ່ວມຊາດລາວ, ສຳລັບຄົນຈີນມີ: ຄູສອນດົນຕີ, ຄູສອນກິລາ, ແພດໝໍ, ເອື້ອຍລ້ຽງເດັກ, ຊ່າງຕັດຜົມ ແລະ ພະນັກງານຊີວິດປະຈຳວັນຕ່າງໆ. ຢູ່ທີ່ນັ້ນ, ພວກເຮົາໄດ້ຫ່າງໄກຈາກແປວໄຟສົງຄາມ, ມີຢູ່ມີກິນ ມີເສື້ອຜ້າອຸ່ນໆນຸ່ງຫົ່ມ, ໄດ້ໃຊ້ຊີວິດຢ່າງມີຄວາມສຸກ ແລະ ເຖິງວ່າຈະຢູ່ຕ່າງແດນ, ແຕ່ພວກເຮົາກໍສາມາດອຸ່ນອ່ຽນຫຸ່ນທ່ຽງໃນການຮ່ຳຮຽນວິຊາຄວາມຮູ້ ແລະ ສືບທອດວັດທະນະທຳອັນດີງາມຂອງຊາດຕົນເອງ.

ໃນເວລານັ້ນ, ພວກເຮົາຍັງເປັນພຽງເດັກນ້ອຍທີ່ໄຮ້ດຽງສາ, ຜູ້ອາຍຸນ້ອຍສຸດກໍມີພຽງແຕ່ 5-6 ປີ, ສ່ວນຜູ້ໃຫຍ່ສຸດກໍມີອາຍຸພຽງແຕ່ 10 ກວ່າປີເທົ່ານັ້ນ. ການທີ່ຕ້ອງຢູ່ຫ່າງໄກຈາກບ້ານເກີດເມືອງນອນ, ຕ້ອງຫ່າງເຫີນຈາກພໍ່ແມ່ ແລະ ບໍ່ມີຍາດຕິພີ່ນ້ອງຢູ່ຄຽງຂ້າງ, ເຮັດໃຫ້ພາຍໃນຈິດໃຈຂອງພວກເຮົາມີແຕ່ຄວາມຄິດຮອດຄິດເຖິງຢ່າງລົ້ນເຫຼືອ. ແຕ່ຢູ່ໂຮງຮຽນ 67 ແຫ່ງນັ້ນ, ພວກເຮົາບໍ່ເຄີຍຮູ້ສຶກໂດດດ່ຽວເລີຍ, ເພາະມີໝູ່ເພື່ອນສະຫາຍລາວ, ແລະເພື່ອນມິດຊາວຈີນໄດ້ມອບໄມຕີຈິດອັນບໍລິສຸດ ແລະ ການເບິ່ງແຍງເອົາໃຈໃສ່ຢ່າງໃກ້ຊິດແທ້ໆ ເພື່ອສ້າງຄວາມອົບອຸ່ນໃຫ້ແກ່ທຸກຄົນ, ເຮັດໃຫ້ໂຮງຮຽນໃນຕ່າງແດນແຫ່ງນັ້ນກາຍເປັນບ້ານເຮືອນທີ່ອົບອຸ່ນ ແລະ ປອດໄພຂອງພວກເຮົາ. ພວກເຮົາໄດ້ຖືເອົາອ້າຍເອື້ອຍທີ່ອາວຸໂສກວ່າເປັນຍາດຕິພີ່ນ້ອງ, ຖືເອົາຄູບາອາຈານທີ່ອ່ອນໂຍນ ແລະ ມີຄວາມຮັບຜິດຊອບສູງເປັນພໍ່ແມ່ ແລະ ຖືເອົາຜູ້ອາວຸໂສໃນທ້ອງຖິ່ນທີ່ມີຈິດໃຈເມດຕາປານີເປັນລຸງປ້າອາວອາຂອງຕົນເອງ. ທ່າມກາງບັນຍາກາດແຫ່ງການຊ່ວຍເຫຼືອເກື້ອກູນ ແລະ ເປັນບ່ອນອີງໃຫ້ກັນແລະກັນນັ້ນ, ມັນໄດ້ສອນໃຫ້ຂ້າພະເຈົ້າຮູ້ຈັກການມີນ້ຳໃຈຕໍ່ຜູ້ຄົນ, ຮູ້ຈັກຄວາມສາມັກຄີຮັກແພງ, ທັງຍັງໄດ້ຮຽນຮູ້ກ່ຽວກັບການຮູ້ບຸນຄຸນ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່.

ໃນຊ່ວງເວລານັ້ນ, ທຸກຄັ້ງທີ່ເກີດຄວາມຄິດຮອດຄິດເຖິງບ້ານເກີດເມືອງນອນ ແລະ ຍາດຕິພີ່ນ້ອງ ພວກເຮົາກໍຈະພາກັນຮ້ອງເພງ “ຈຳປາເມືອງລາວ”. ບົດເພງບົດນີ້ ບໍ່ພຽງແຕ່ແມ່ນສິ່ງແທນຄວາມຮັກຊາດຮັກບ້ານເກີດຂອງພວກເຮົາເທົ່ານັ້ນ, ແຕ່ມັນຍັງເປັນສິ່ງທີ່ຄອຍປອບປະໂລມຈິດໃຈໃຫ້ຄາຍຄວາມຄິດຮອດບ້ານໃນຍາມຢູ່ຕ່າງແດນ, ທັງເປັນເພື່ອນຮ່ວມທາງທີ່ພາພວກເຮົາເຕີບໃຫຍ່ຂຶ້ນຢູ່ຈີນ.

ການເວລາໝູນວຽນປ່ຽນໄປ, ສອງຊາດ ລາວ-ຈີນ ໄດ້ຮ່ວມກັນຜ່ານຜ່າອຸປະສັກ ແລະ ສິ່ງທ້າທາຍຕ່າງໆມາດ້ວຍກັນ ຈົນກ້າວເຂົ້າສູ່ສັງກາດໃໝ່ແຫ່ງສັນຕິພາບ ແລະ ການພັດທະນາ. ເຖິງວ່າສະພາບການຈະປ່ຽນແປງໄປຄືແນວໃດກໍຕາມ, ແຕ່ຂ້າພະເຈົ້າຍັງຄົງຈົດຈຳໄລຍະເວລາທີ່ໄດ້ໄປສຶກສາຮ່ຳຮຽນຢູ່ປະເທດຈີນນັ້ນສະເໝີ ແລະ ມັກຈະເລົ່າເລື່ອງລາວປະຫວັດສາດດັ່ງກ່າວ ໃຫ້ຍາດຕິພີ່ນ້ອງ ແລະ ລູກຫຼານໄດ້ຮັບຟັງຢູ່ຕະຫຼອດ. ດ້ວຍເຫດນັ້ນ, ຂ້າພະເຈົ້າຈຶ່ງໄດ້ຕັ້ງໃຈສ້າງເງື່ອນໄຂໂອກາດ ເພື່ອສົ່ງລູກທັງ 3 ຄົນໃຫ້ໄດ້ໄປຢ້ຽມຢາມໂຮງຮຽນ 67 ຕາມລຳດັບ, ເພື່ອໃຫ້ເຂົາເຈົ້າໄດ້ເຫັນກັບຕາ ກ່ຽວກັບສະຖານທີ່ ທີ່ຜູ້ເປັນພໍ່ທີ່ເຄີຍໄດ້ໃຊ້ຊີວິດໃນເມື່ອກ່ອນ ແລະ ໃຫ້ເຂົາເຈົ້າໄດ້ສຳຜັດດ້ວຍຕົນເອງເຖິງປະຫວັດສາດອັນໜັກແໜ້ນ ທີ່ໄດ້ຈາລຶກສາຍໃຍມິດຕະພາບ ລະຫວ່າງ ສອງຊາດຂອງພວກເຮົາໄວ້.

ລູກສາວຫຼ້າຂອງຂ້າພະເຈົ້າ, ນາງ ແກ້ວວິພາພອນ ໄຂຄຳພິທູນ, ຜູ້ທີ່ຮຽນຈົບຈາກມະຫາວິທະຍາໄລ ສ້າງຄູ ຮວາຕົງ ສປ ຈີນ. ກ່ອນທີ່ລູກຈະເດີນທາງໄປຢ້ຽມຢາມໂຮງຮຽນ 67, ລູກສາວກໍໄດ້ຖາມຂ້າພະເຈົ້າວ່າ: “ພໍ່ເອີຍ, ລູກຄວນຈະກຽມຫຍັງໄປສະແດງໃຫ້ເພິ່ນເບິ່ງດີ?” ຂ້າພະເຈົ້າຈຶ່ງບອກລູກໄປວ່າ: “ລູກເອີຍ, ບໍ່ຕ້ອງຊອກຫາຫຍັງມາສະແດງໃຫ້ຍາດອກ, ຂໍພຽງແຕ່ໃຫ້ລູກຮ້ອງເພງ “ຈຳປາເມືອງລາວ” ອອກມາຈາກໃຈໃຫ້ດີທີ່ສຸດກໍພໍແລ້ວ”. ເພາະຂ້າພະເຈົ້າຢາກໃຫ້ລູກໄດ້ຮັບຮູ້ເຖິງຈິດວິນຍານຂອງຄົນຮຸ່ນພໍ່ ໃນຍາມທີ່ຢູ່ຫ່າງໄກຈາກບ້ານເກີດເມືອງນອນ ວ່າພວກເຮົາໄດ້ຮັບຄວາມຮັກແພງອັນອົບອຸ່ນ ແລະ ຍຶດໝັ້ນໃນອຸດົມການໜັກແໜ້ນພຽງໃດ ຜ່ານສຽງເພງນັ້ນ. ທີ່ສຳຄັນໄປກວ່ານັ້ນ, ກໍເພື່ອໃຫ້ລູກໄດ້ເຂົ້າໃຈເຖິງສາຍໃຍຜູກພັນອັນເລິກເຊິ່ງ ລະຫວ່າງ ລາວ-ຈີນ ທີ່ໄດ້ຜ່ານຮ້ອນຜ່ານໜາວມາຮ່ວມກັນ, ເພື່ອໃຫ້ລູກໄດ້ສືບທອດນ້ຳໃຈຮູ້ບຸນຄຸນ ແລະ ຄວາມຮັກແພງ ທີ່ຈາລຶກຢູ່ໃນສາຍເລືອດຂອງພວກເຮົາຕະຫຼອດໄປ.

ກ່ອນໜ້ານີ້, ຂ້າພະເຈົ້າໄດ້ມີໂອກາດໄປຢ້ຽມຢາມມະຫາວິທະຍາໄລຊົນເຜົ່າຢຸນນານ, ຂ້າພະເຈົ້າໄດ້ເຫັນນັກສຶກສາຊາວຈີນຈຳນວນຫຼາຍ ກຳລັງພາກັນຕັ້ງໃຈຮ່ຳຮຽນພາສາລາວຢ່າງດຸໝັ່ນ, ໃນເວລານັ້ນ ພາຍໃນຈິດໃຈຂອງຂ້າພະເຈົ້າແມ່ນເຕັມໄປດ້ວຍຄວາມພາກພູມໃຈ ແລະ ຊື່ນຊົມ ຢ່າງບອກບໍ່ຖືກ. ຂ້າພະເຈົ້າຮູ້ສຶກຄືກັບວ່າ ໄດ້ເຫັນພາບຂອງຕົນເອງໃນເມື່ອກ່ອນ, ແຕ່ສິ່ງທີ່ຕ່າງກັນກໍຄື: ໃນສະໄໝນັ້ນ ພວກເຮົາທີ່ເດີນທາງມາຮຽນຢູ່ຈີນ, ແຕ່ໃນປັດຈຸບັນຊາວໜຸ່ມຈີນພັດເປັນຝ່າຍມີຄວາມຫ້າວຫັນ ໃນການຊອກຮຽນຮູ້ພາສາ ແລະ ວັດທະນະທຳລາວ. ສິ່ງນີ້ເຮັດໃຫ້ຂ້າພະເຈົ້າຮູ້ສຶກຢ່າງເລິກເຊິ່ງວ່າ: ການຮ່ວມມືລະຫວ່າງ ລາວ-ຈີນ ບໍ່ແມ່ນພຽງແຕ່ເປັນວຽກງານລະຫວ່າງລັດຖະບານເທົ່ານັ້ນ, ແຕ່ມັນໄດ້ຢັ່ງຮາກລົງເລິກເຖິງ ໃນດວງໃຈຂອງຊາວໜຸ່ມທັງສອງຊາດຢ່າງແທ້ຈິງ. ບໍ່ວ່າຈະແມ່ນໃນຂົງເຂດທາງລົດໄຟ, ການຄ້າ, ການສຶກສາ ຫຼື ວັດທະນະທຳ, ຊາວໜຸ່ມສອງຊາດ ພ້ອມນຳໃຊ້ວິທີການຂອງຕົນເອງເພື່ອສືບຕໍ່ສາຍໃຍມິດຕະພາບນີ້ໃຫ້ໝັ້ນຄົງຍືນຍົງຕະຫຼອດໄປ, ເຊິ່ງນີ້ແມ່ນພາບທີ່ຂ້າພະເຈົ້າປາຖະໜາຢາກເຫັນທີ່ສຸດ.

ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ຈີນ ຄົບຮອບ 65 ປີ ນີ້, ຂ້າພະເຈົ້າຢາກບອກກັບຊາວໜຸ່ມທັງສອງຊາດວ່າ: ມິດຕະພາບ ລາວ-ຈີນ ບໍ່ໄດ້ເກີດຂຶ້ນມາຈາກມືເປົ່າ, ແຕ່ມັນແມ່ນໝາກຜົນແຫ່ງການຖະໜອມທົດສົງດ້ວຍຄວາມຈິງໃຈ, ດ້ວຍຄວາມໄວ້ເນື້ອເຊື່ອໃຈ ແລະ ການເສຍສະຫຼະອັນສູງສົ່ງ ຂອງການນຳຮຸ່ນກ່ອນ ກໍຄືປະຊາຊົນຮຸ່ນກ່ອນ ທີ່ໄດ້ຜ່ານຜ່າການທົດສອບແຫ່ງແປວໄຟສົງຄາມມາດ້ວຍກັນ. ຊາວໜຸ່ມຄົນຮຸ່ນໃໝ່ ບໍ່ພຽງແຕ່ແມ່ນຜູ້ສືບທອດມິດຕະພາບນີ້ເທົ່ານັ້ນ, ແຕ່ຍັງຈະແມ່ນຜູ້ບຸກເບີກອະນາຄົດໃຫ້ກ້າວໄກກວ່າເກົ່າ. ຂໍໃຫ້ພວກລູກຫຼານທັງຫຼາຍ ຈົ່ງຮັກສາອຸດົມການອັນບໍລິສຸດຜຸດຜ່ອງຂອງຄົນຮຸ່ນກ່ອນ, ໃຫ້ຈົດຈຳປະຫວັດສາດແຫ່ງການຮ່ວມທຸກຮ່ວມສຸກ, ແລະ ສ້າງຈິດສຳນຶກໃນການຖະໜອມຮັກມິດຕະພາບ ແລະ ຮັກຫອມສັນຕິພາບໃຫ້ໝັ້ນຄົງ, ເພື່ອເຮັດໃຫ້ຈຳປາເບັ່ງບານຕະຫຼອດການ ແລະ ເຮັດໃຫ້ມິດຕະພາບ ລາວ-ຈີນ ຍືນຍົງໝັ້ນຄົງຊົ່ວລູກຊົ່ວຫຼານຕະຫຼອດໄປ.

ໂດຍ: ວິມົນ, ຫວັງຮວນ, ຮວງຢີ້ຊຽນ

(ສະໜອງຂໍ້ມູນໂດຍ: ວາລະສານ “ຈຳປາ” ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

www.yunnangateway.com